This VIS translation is out of date. When you give your patient this translation, also give them the up-to-date English version of it.
To get both, and to find out what was updated, go to www.immunize.org/vis

# ວັກຊີນປ້ອງກັນ ບາດພະຍັກ ແລະ ໂຣກຄໍຕີບ (Td)

## ກ່ຽວກັບເຊື້ອໂຣກຕ່າງໆ

ບາດພະຍັກ (ລອກຈໍ) ແລະໂຣກຄໍຕີບ ຖືວ່າ ເປັນພະຍາດທີ່ຮ້າຍແຮງຫລາຍ. ບາດພະຍັກ ເກີດຂຶ້ນໄດ້ ດ້ວຍການຕິດຕໍ່ຂອງເຊື້ອໂຣກ ເຂົ້າ ໄປສູ່ຮ່າງກາຍໂດຍທາງປາກບາດ ຫລື ຕາມບາດແຜ, ໂຣກຄໍຕີບແຜ່ຜາຍອອກໄປໄດ້ ຈາກຜູ້ທີ່ຕິດເຊື້ອໂຣກໄປສູ່ຄົນອື່ນໄດ້ໂດຍທາງ ດັງແລະທາງປາກ.

| ບາດພະຍັກເຮັດໃຫ້ເກີດ: | ໂຣກຄໍຕີບເຮັດໃຫ້ເກີດ: |
|---|---|
| ເຈັບປວດກະຕຸ້ນ ຕາມກ້າມເນື້ອທົ່ວໄປ | ອາການຕັນດັງ, ຫັນໃຈຝືດໃນຮູຄໍ, ຫລື ຫລອດລົມບໍ່ສະດວກ |
| **ມັນສາມາດນຳໄປສູ່:** | **ມັນສາມາດນຳໄປສູ່:** |
| - ຄາງກະໄຕ "ແຂງ" ແລ້ວເຮັດ ໃຫ້ຄົນເຈັບບໍ່ສາມາດອ້າປາກ ຫລືບໍ່ສາມາດກືນໄດ້ | - ການຫາຍໃຈຍາກ |
| - ຕາຍ | - ຫົວໃຈບໍ່ທຳງານ |
| | - ອຳມະພາດ |
| | - ຕາຍ |

## ສິ່ງທີ່ທ່ານຄວນຈະຮູ້ຈັກ ກ່ອນທີ່ທ່ານ ຫລື ເດັກຂອງທ່ານຈະສັກ ວັກຊີນ



## ກ່ຽວກັບວັກຊີນຕ່າງໆ

### ຜົນປະໂຍດຕ່າງໆຂອງວັກຊີນ

ການສັກວັກຊີນ ແມ່ນຖືວ່າເປັນທາງທີ່ດີທີ່ ສຸດ ຕໍ່ການປ້ອງກັນຕໍ່ສູ້ກັບບາດພະຍັກ ແລະ ໂຣກຄໍຕີບ ຍ້ອນການສັກວັກຊີນປ້ອງກັນ ມັນ ຈຶ່ງເຮັດໃຫ້ມີກໍລະນີດັ່ງກ່າວນີ້ມີນ້ອຍລົງ. ກໍລະນີດັ່ງກ່າວນີ້ເກີດຂຶ້ນນ້ອຍທີ່ສຸດກັບພວກ ເດັກໆ ຍ້ອນວ່າເຂົາເຈົ້າສ່ວນຫລາຍສັກວັກຊີນສຳລັບ DTP (ໂຣກຄໍຕີບ, ບາດພະຍັກ, ແລະໄອຫືດ), DTaP (ໂຣກຄໍຕີບ, ບາດພະ ຍັກ, ແລະໄອຫືດ ແບບອາການຫນັກ), ຫລື DT (ໂຣກຄໍຕີບ ແລະບາດພະຍັກ). ມັນຈະມີ ກໍລະນີດັ່ງກ່າວ ນີ້ເພີ້ມຫລາຍຂຶ້ນ ຖ້າພວກ ເຮົາຫຍຸດການ ສັກວັກຊີນ.

### ເມື່ອໃດທີ່ທ່ານຄວນສັກວັກຊີນສຳລັບ Td?

ວັກຊີນ Td ຜລິດຂຶ້ນມາເພື່ອໃຊ້ສຳລັບຄົນຜູ້ ທີ່ມີອາຍຸ ໗ ປີ ຫລືແກ່ກວ່າ.

ຄົນຜູ້ທີ່ຍັງບໍ່ໄດ້ສັກວັກຊີນ ຢ່າງນ້ອຍ ໓ ຄັ້ງ ຊຶ່ງເປັນວັກຊີນອັນໃດກໍ່ຕາມທີ່ເປັນວັກຊີນ ປ້ອງກັນບາດພະຍັກ ແລະໂຣກຄໍຕີບ (DTP, DTaP, ຫລື DT) ໃນຊົ່ວໄລຍະຊີວິດຂອງເຂົາ ເຈົ້ານັ້ນ ເຂົາເຈົ້າຄວນສັກວັກຊີນສຳລັບ Td. ຫລັງຈາກທີ່ເຂົາເຈົ້າໄດ້ສັກວັກຊີນເທື່ອທີ ສາມແລ້ວ, ເຂົາເຈົ້າຈະຕ້ອງການສັກວັກຊີນ Td ທຸກໆໄລຍະ ໑໐ ປີ ໃນຕລອດຊົ່ວຊີວິດ.

ວັກຊີນສຳລັບປ້ອງກັນເຊື້ອໂຣກອື່ນໆ ກໍ່ອາດ ຈະໄດ້ສັກໃຫ້ພ້ອມໆກັນ ກັບການສັກວັກຊີນສຳລັບ Td.

ໃຫ້ບອກທ່ານຫມໍຫລື ຜູ້ຊ່ວຍພະຍາບານ ຂອງທ່ານຊາບ ຖ້າວ່າຄົນຜູ້ທີ່ສັກວັກຊີນ:

- ເຄີຍເບື່ອ ຫລືແພ້ຢາຢ່າງຫນັກມາກ່ອນ ຫລືເຄີຍມີບັນຫາກ່ຽວກັບວັກຊີນ Td, ຫລື ວັກຊີນອື່ນໆທີ່ເປັນວັກຊີນສຳລັບປ້ອງກັນ ບາດພະຍັກ ແລະໂຣກຄໍຕີບ (DTP, DTaP, ຫລື DT)
- ປັດຈຸບັນນີ້ ມີອາການເຈັບປ່ວຍພໍປານກາງ ຫລືເຈັບປ່ວຍຫນັກ
- ຖືພາ

ຖ້າທ່ານບໍ່ແນ່ໃຈ, ໃຫ້ຖາມທ່ານຫມໍ ຫລື ຜູ້ຊ່ວຍພະຍາບານຂອງທ່ານ.

### ແມ່ນຫຍັງຄືການສ່ຽງຈາກການສັກວັກຊີນ Td?

ກັບຢາຊນິດໃດກໍ່ຕາມ, ມັນຈະມີການສ່ຽງຕໍ່ ການທີ່ຈະມີບັນຫາທີ່ຮ້າຍແຮງນັ້ນນ້ອຍທີ່ສຸດ ເຖິງແມ່ນວ່າການຕາຍ ກໍ່ສາມາດເກີດຂຶ້ນໄດ້ ຫລັງຈາກສັກຢາວັກຊີນແລ້ວ.

ການສ່ຽງຈາກການສັກວັກຊີນນັ້ນ ແມ່ນວ່າມີ<u>ນ້ອຍກວ່າ</u>ການສ່ຽງຕໍ່ພະຍາດຕ່າງໆ<u>ຫລາຍທີ່ສຸດ</u> ຖ້າຫາກຄົນເຮົາຫຍຸດໃຊ້ວັກຊີນ.

ຜູ້ທີ່ສັກວັກຊີນ Td ເກືອບຫມົດທຸກຄົນບໍ່ມີບັນ ຫາຈາກການສັກວັກຊີນນີ້.

U.S. DEPARTMENT OF HEALTH & HUMAN SERVICES
Public Health Service
Centers for Disease Control and Prevention

**ບັນຫາເບົາ**

ຖ້າວ່າມີບັນຫາດັ່ງກ່າວນີ້ເກີດຂຶ້ນ ມັນມັກເລີ່ມເປັນພາຍໃນຫລາຍໆຊົ່ວໂມງໃນນຶ່ງ ຫລືສອງມື້ ຫລັງຈາກການສັກວັກຊີນແລ້ວ. ມັນອາດຈະເປັນຢູ່ດົນເຖິງ ໑-໔ ມື້:

- ເຈັບປວດ, ແດງທຶມ, ຫລືເປັນບວມຢູ່ບ່ອນທີ່ສັກວັກຊີນນັ້ນ

ບັນຫາດັ່ງກ່າວນີ້ສາມາດເປັນແຮງກັບຜູ້ໃຫຍ່ຜູ້ທີ່ມັກສັກວັກຊີນເລື້ອຍໆ.

ເພື່ອບັນເທົາຄວາມເຈັບປວດນັ້ນ ອາດຈະໄດ້ໃຊ້ຢາ ເອຊີຕາມີໂນເຟັນ ຫລືອີບູປໂປຣຟີນ (ບໍ່ມີ-ແອສເປຣິນປະສົມ) ແກ້.

**ບັນຫາຫນັກ**

ບັນຫາດັ່ງກ່າວນີ້ມັກເກີດຂຶ້ນ**ຫນ້ອຍເທື່ອທີ່ສຸດ:**

- ການແພ້ຢາຢ່າງຫນັກ
- ເຈັບສູບ, ກ້າມກົກແຂນເສັຽຫາຍ. ກໍຣະນີດັ່ງກ່າວນີ້ເລີ່ມເປັນພາຍໃນ ໔ ວັນ ຫາ ໔ ອາທິດ ຫລັງຈາກການສັກວັກຊີນ ແລະກໍອາດຈະເປັນຢູ່ນານຫລາຍເດືອນ.

**ຈະເຮັດແນວໃດຖ້າຫາກວ່າມີອາການແພ້ຢາເກີດຂຶ້ນ:**

- ໂທຫາທ່ານຫມໍ ຫລືເອົາຜູ້ກ່ຽວໄປພົບທ່ານຫມໍໂດຍດ່ວນ.
- ຈົດບັນທຶກກ່ຽວກັບສິ່ງທີ່ເກີດຂຶ້ນ ພ້ອມທັງວັນທີແລະເວລາທີ່ມັນເກີດຂຶ້ນນັ້ນໄວ້.
- ຖາມທ່ານຫມໍ, ຜູ້ຊ່ວຍພະຍາບານ, ຫລືກະຊວງສາທາຣະນະສຸກເພື່ອແຈ້ງເຫດການອັນຕລາຍຂອງວັກຊີນ (Vaccine Adverse Report) ຫລືໂທ:

(800) 822-7967 (ເລກໂທຟຣີ)

---

**ໂຄງການຊ່ວຍເຫລືອການເຈັບເປັນທີ່ເກີດຂຶ້ນຈາກການສັກວັກຊີນແຫ່ງຊາດ (National Vaccine Injury Compensation Program)** ໃຫ້ການຊົດເຊີຍ (ການຈ່າຍ) ສຳລັບບຸກຄົນທີ່ຖືກສາຫັດໂດຍການສັກວັກຊີນ. ຕ້ອງການລາຍຣະອຽດເພີ່ມເຕີມໃຫ້ໂທໄປຍັງ:

(800) 339-2382 (ເລກໂທຟຣີ)

---

ຖ້າຫາກວ່າທ່ານຕ້ອງການຮຽນຮູ້ຕື່ມອີກນັ້ນໃຫ້ຖາມທ່ານຫມໍ ຫລືຜູ້ຊ່ວຍພະຍາບານຂອງທ່ານ, ຊຶ່ງເຂົາເຈົ້າສາມາດທີ່ຈະເອົາລາຍຣະອຽດທັງຫມົດກ່ຽວກັບວັກຊີນໃຫ້ທ່ານໄດ້ຫລືສາມາດທີ່ຈະສເນີແນະແຫລ່ງລາຍຣະອຽດໃຫ້.



Td 6/10/94 Laotian
42 U.S.C. § 300aa-26
Translation provided by the Minnesota Department of Health